ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ

ສູນອິນເຕີເນັດ ແຫ່ງຊາດ

ເລກທີ 055/ສອຊ

ນະຄອນຫຼວງວຽງຈັນ, ວັນທີ 18 ມັງກອນ 2022

# ລະບຽບການຄຸ້ມຄອງການນຳໃຊ້ ແລະ ໃຫ້ບໍລິການ ສູນຂໍ້ມູນແຫ່ງຊາດ ຂອງ ສູນອິນເຕີເນັດ ແຫ່ງຊາດ

- ອີງຕາມ ລັດຖະບັນຍັດ ຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ເລກທີ 002/ປປທ ລົງວັນທີ 17 ມິຖຸນາ 2021
- ອີງຕາມ ດຳລັດ ວ່າດ້ວຍ ການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ, ສະບັບເລກທີ 327/ລບ, ລົງວັນທີ 16 ກັນຍາ 2014
- ອີງຕາມ ກົດໝາຍ ວ່າດ້ວຍ ການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ເລກທີ 61/ສພຊ ລົງວັນທີ 15 ກໍລະກົດ 2015
- ອີງຕາມ ດຳລັດ ວ່າດ້ວຍ ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ, ສະບັບເລກທີ 412/ລບ, ລົງວັນທີ 10 ພະຈິກ 2016
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງ ໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ສູນອິນເຕີເນັດ ແຫ່ງຊາດ, ສະບັບເລກທີ 2164/ປທສ, ລົງວັນທີ 15 ກໍລະກົດ 2016

## ສູນອິນເຕີເນັດແຫ່ງຊາດ ອອກລະບຽບການ:

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1: ຈຸດປະສົງ

ລະບຽບການສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການຕ່າງໆ ໃນການຄຸ້ມຄອງການນຳໃຊ້ ແລະ ໃຫ້ບໍລິການສູນຂໍ້ມູນ ແຫ່ງຊາດ ຂອງ ສູນອິນເຕີເນັດ ແຫ່ງຊາດ ເພື່ອຄຸ້ມຄອງວຽກງານດັ່ງກ່າວ ຢ່າງເປັນລະບົບ, ມີລະບຽບ, ມີຄວາມປອດໄພ, ສະຖຽນລະພາບດີ ແລະ ແນໃສ່ປະກອບສ່ວນ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

ມາດຕາ 2: ລະບຽບການຄຸ້ມຄອງການນໍາໃຊ້ ແລະ ໃຫ້ບໍລິການ

ໝາຍເຖິງ ກົນໄກ, ເງື່ອນໄຂ ແລະ ຂໍ້ຜູກມັດ, ການຄຸ້ມຄອງ ການໃຫ້ບໍລິການ ລະຫວ່າງຜູ້ໃຊ້ບໍລິການ ແລະ ຜູ້ໃຫ້ບໍລິການ ໂດຍປະຕິບັດຕາມລະບຽບການ, ຫຼັກການ ແລະ ບັນດາເອກະສານຕ່າງໆ ລວມເຖິງ ກົດໝາຍ ຂອງ ສປປ ລາວ ທີ່ກ່ຽວຂ້ອງ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ມາດຕາ 3: ຂອບເຂດບັງຄັບໃຊ້

ລະບຽບການສະບັບນີ້ນໍາໃຊ້ສໍາລັບ ນິຕິບຸກຄົນ, ການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງທົ່ວໄປ ທັງພາຍໃນ ແລະ ຕ່າງປະເທດ ທີ່ມາໃຊ້ບໍລິການ ສູນຂໍ້ມູນແຫ່ງຊາດ.

ມາດຕາ 4: ການອະທິບາຍສັບ

ຄໍາສັບທີ່ໃຊ້ໃນລະບຽບການສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ສູນອິນເຕີເນັດແຫ່ງຊາດ (ສອຊ)** ແມ່ນ ອົງການຈັດຕັ້ງໜຶ່ງທີ່ຂຶ້ນກັບ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ (ກຕສ) ມີສິດ ແລະ ໜ້າທີ່ດໍາເນີນການເຄື່ອນໄຫວ, ຈັດຕັ້ງ ປະຕິບັດຕາມພາລະບົດບາດ ທີ່ທາງກະຊວງ ຕສ ໄດ້ກໍານົດໄວ້.
2. **ສູນຂໍ້ມູນແຫ່ງຊາດ** ແມ່ນລະບົບລວມສູນໂຄງລ່າງພື້ນຖານ ແລະ ລະບົບເຕັກນິກ ເພື່ອສະໜອງການໃຫ້ບໍລິການດ້ານຂໍ້ມູນຂ່າວສານເປັນຕົ້ນ ການບໍລິການເຊົ່າເຊີເວີຈໍາລອງເທິງລະບົບຄລາວ (VPS), ບໍລິການເຊົ່າພື້ນທີ່ຝາກອຸປະກອນໄອຊີທີ (Co-location), ການບໍລິການຮັບຝາກເວັບໄຊ (Hosting) ຂອງພາກລັດ ແລະ ພາກສ່ວນທົ່ວໄປ ທັງພາຍໃນ ແລະ ຕ່າງປະເທດ.
3. **ການບໍລິການ ຂອງ ສູນຂໍ້ມູນແຫ່ງຊາດ** ໝາຍເຖິງ ບັນດາບໍລິການຕ່າງໆ ທີ່ນໍາໃຊ້ໃນ ສູນຂໍ້ມູນແຫ່ງຊາດ ຂອງ ສອຊ ເຊັ່ນ: ການເຊົ່າເຊີເວີຈໍາລອງເທິງລະບົບຄລາວ (VPS), ການບໍລິການຮັບຝາກເວັບໄຊ (Hosting) ແລະ ເຊົ່າພື້ນທີ່ຝາກອຸປະກອນ (Co-location).
4. **ບໍລິການເຊົ່າເຊີເວີຈໍາລອງ ເທິງລະບົບຄລາວ (Virsual Private Server (VPS))** ໝາຍເຖິງ ການບໍລິການ ທີ່ ສອຊ ສະໜອງຊັບພະຍາກອນ ຄອມພິວເຕີ ຫຼື ເຊີເວີແບບຈໍາລອງ (VPS) ພ້ອມດ້ວຍລະບົບເຄືອຂ່າຍ ໃຫ້ກັບຜູ້ຊົມໃຊ້ ແລະ ຜູ້ຊົມໃຊ້ສາມາດບໍລິຫານຈັດການ ແລະ ຕິດຕັ້ງຊອບແວຕ່າງໆຜ່ານອິນເຕີເນັດໄດ້ດ້ວຍຕົວເອງ.
5. **ບໍລິການຮັບຝາກເວັບໄຊ (Hosting)** ໝາຍເຖິງ ການບໍລິການ ທີ່ ສອຊ ສະໜອງລະບົບຮັບຝາກເວັບໄຊໃຫ້ຜູ້ໃຊ້ບໍລິການໂດຍກໍານົດພື້ນທີ່ຈັດເກັບຂໍ້ມູນເວັບໄຊ ຕາມການສະເໜີຂອງຜູ້ຊົມໃຊ້.
6. **ບໍລິການໃຫ້ເຊົ່າພື້ນທີ່ຫ້ອງເຄື່ອງ (Co-location)** ໝາຍເຖິງການບໍລິການ ໃຫ້ເຊົ່າພື້ນທີ່ຝາກອຸປະກອນໄອຊີທີ ທີ່ສະໜອງ ລະບົບໄຟຟ້າ, ລະບົບແອເຢັນ ແລະ ລະບົບເຄືອຂ່າຍ ເພື່ອຮອງຮັບການຕິດຕັ້ງບັນດາອຸປະກອນໄອຊີທີ.
7. **ຜູ້ຄຸ້ມຄອງ** ໝາຍເຖິງ ໜ່ວຍງານ ຫຼື ພະນັກງານ ຂອງສູນຂໍ້ມູນ ແຫ່ງຊາດ ກໍ່ຄືສູນອິນເຕີເນັດແຫ່ງຊາດທີ່ເປັນຜູ້ຄຸ້ມຄອງພື້ນຖານໂຄງລ່າງ, ລະບົບເຕັກນິກ ຂອງສູນຂໍ້ມູນ ແຫ່ງຊາດ ແລະ ຍັງເປັນຜູ້ຄຸ້ມຄອງ ຜູ້ມາໃຊ້ບໍລິການໃຫ້ປະຕິບັດຕາມລະບຽບ ຫຼັກການ ທີ່ໄດ້ກໍານົດໄວ້.

8. ຜູ້ໃຊ້ບໍລິການ ໝາຍເຖິງ ນິຕິບຸກຄົນ, ອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງທົ່ວໄປ ທັງພາຍໃນ ແລະ ຕ່າງປະເທດ ທີ່ມານຳໃຊ້ການບໍລິການສູນຂໍ້ມູນ ແຫ່ງຊາດ ແລະ ຕ້ອງປະຕິບັດຕາມລະບຽບການທີ່ກຳນົດໄວ້.
9. ຊອບແວ (Software) ໝາຍເຖິງ ຊຸດຄຳສັ່ງ ຫຼື ໂປຣແກຣມ ທີ່ລະບົບຄອມພິວເຕີສາມາດປະຕິບັດໄດ້ເພື່ອໃຫ້ເກີດຜົນຮັບຕາມທີ່ກຳນົດໄວ້.
10. ອຸປະກອນ ໄອຊີທີ ໝາຍເຖິງ ບັນດາອຸປະກອນ ເອເລັກໂຕຣນິກ ທີ່ຖືກນຳໃຊ້ໃນການເຊື່ອມຕໍ່, ສື່ສານ ແລະ ສົ່ງຂໍ້ມູນ ໃນຮູບແບບເຄືອຂ່າຍ ເຊັ່ນ: ເຄື່ອງແມ່ຂ່າຍ (Server), ອຸປະກອນເຄືອຂ່າຍອິນເຕີເນັດ (Router, Switch), ອຸປະກອນປ້ອງກັນໄພທາງດ້ານເຄືອຂ່າຍ (Firewall) ແລະ ອຸປະກອນໂທລະຄົມຕ່າງໆເປັນຕົ້ນ.
11. ເວັບໄຊ (Website) ໝາຍເຖິງ ລະບົບຂໍ້ມູນຂ່າວສານທີ່ຖືກສ້າງຂຶ້ນເປັນໜຶ່ງ ຫຼື ຫຼາຍໜ້າເວັບໄຊ ເພື່ອນຳສະເໜີຂໍ້ມູນ ຜ່ານເຄືອຂ່າຍອິນເຕີເນັດ.
12. ລັອກຟາຍ (Log file) ໝາຍເຖິງ ຂໍ້ມູນບັນທຶກກິດຈະກຳການເຄື່ອນໄຫວຕ່າງໆໃນການນຳໃຊ້ລະບົບ.
13. ຖານຂໍ້ມູນ (Database) ໝາຍເຖິງ ການຈັດການບັນທຶກ ແລະ ເກັບຮັກສາ ຂໍ້ມູນຂ່າວສານ ໃນຮູບແບບເອເລັກໂຕຣນິກ ໄວ້ຢ່າງເປັນລະບົບ ທີ່ສາມາດຄຸ້ມຄອງ, ປັບປຸງ ແລະ ນຳໃຊ້ໄດ້.
14. ຊັບພະຍາກອນຄອມພິວເຕີ (Resource) ໝາຍເຖິງ ບັນດາຂະໜາດ, ຂີດຂັ້ນຄວາມສາມາດຂອງລະບົບທີ່ຖືກນຳໃຊ້ເຊັ່ນ: CPU, RAM, Storages

## ໝວດທີ II

## ການອະນຸຍາດນຳໃຊ້ບໍລິການ ສູນຂໍ້ມູນແຫ່ງຊາດ ຂອງ ສອຊ

### ມາດຕາ 5: ເງື່ອນໄຂຂອງຜູ້ໃຊ້ບໍລິການ

ຜູ້ທີ່ມາຂໍໃຊ້ບໍລິການ ສູນຂໍ້ມູນແຫ່ງຊາດ ທີ່ເປັນ ນິຕິບຸກຄົນ, ອົງການຈັດຕັ້ງພັກ-ລັດ, ແລະ ອົງການຈັດຕັ້ງທົ່ວໄປ ທັງພາຍໃນ ແລະ ຕ່າງປະເທດ ນຳ ສອຊ ຕ້ອງໄດ້ປະຕິບັດຕາມເງື່ອນໄຂດັ່ງນີ້:

1. ປະກອບແບບຟອມ ຕາມກຳນົດໄວ້.
2. ຜ່ານການຕົກລົງເຫັນດີ ແລະ ໄດ້ຮັບອະນຸຍາດຈາກ ຄະນະ ສອຊ ຢ່າງເປັນລາຍລັກອັກສອນ.
3. ຕ້ອງແມ່ນຂໍ້ມູນຂ່າວສານ ແລະ ບັນດາອຸປະກອນໄອຊີທີ ທີ່ຢູ່ໃນການຄຸ້ມຄອງຂອງຕົນເອງຢ່າງແທ້ຈິງ.
4. ປະຕິບັດຕາມລະບຽບທີ່ ໄດ້ວາງອອກຢ່າງເຂັ້ມງວດ.

### ມາດຕາ 6: ຂັ້ນຕອນ ການໃຊ້ບໍລິການ ສູນຂໍ້ມູນແຫ່ງຊາດ

ຜູ້ທີ່ມາຂໍນຳໃຊ້ບໍລິການ ສູນຂໍ້ມູນ ແຫ່ງຊາດ ຕ້ອງໄດ້ປະກອບເອກະສານ ຕາມຂັ້ນຕອນ ແລະ ປະຕິບັດຕາມລະບຽບການຕ່າງໆ ດັ່ງລຸ່ມນີ້:

1. ອົງການຈັດຕັ້ງພັກ-ລັດ:
   - ໃບຄຳຮ້ອງ ແລະ ແບບຟອມ ຂໍອະນຸຍາດນຳໃຊ້ບໍລິການ ສູນຂໍ້ມູນແຫ່ງຊາດ

- ແຜນວາດເຕັກນິກ ແລະ ລາຍການອຸປະກອນ, ສໍາລັບການໃຊ້ບໍລິການຝາກອຸປະກອນໄອຊີທີ ແລະ ການເຊົ່າເຊີເວີຈໍາລອງເທິງລະບົບຄລາວ.
- ເອກະສານຢັ້ງຢືນ ການສ້າງຕັ້ງອົງການ

2. ນິຕິບຸກຄົນ ຫຼື ອົງການຈັດຕັ້ງທົ່ວໄປ:
   - ໃບຄໍາຮ້ອງ ແລະ ແບບຟອມ ຂໍອະນຸຍາດນໍາໃຊ້ບໍລິການ ສູນຂໍ້ມູນແຫ່ງຊາດ.
   - ແຜນວາດເຕັກນິກ ແລະ ລາຍການອຸປະກອນ. ສໍາລັບການໃຊ້ບໍລິການຝາກອຸປະກອນໄອຊີທີ ແລະ ການເຊົ່າເຊີເວີຈໍາລອງເທິງລະບົບຄລາວ.
   - ສໍາເນົາໃບອະນຸຍາດລົງທຶນ ຫຼື ໃບທະບຽນວິສາຫະກິດ.
   - ເອກະສານຢັ້ງຢືນອົງການ.

## ມາດຕາ 7: ມາດຖານດ້ານເຕັກນິກ

### 7.1 ມາດຖານການເຊົ່າພື້ນທີ່ຝາກອຸປະກອນໄອຊີທີ (Co-location)

- ມາດຕະຖານຕູ້ແຮກຂອງຫ້ອງເຄື່ອງ Co-location ແມ່ນ ຄວາມກວ້າງ 600 ມມ x ຄວາມເລິກ 1200 ມມ x ຄວາມສູງ 2000 ມມ, 42 U.
- ມາດຖານເຄື່ອງແມ່ຂ່າຍ (server) ມີຂະໜາດ ຕັ້ງແຕ່ 1U Rack (ເທົ່າກັບ 4,445 cm), 2U Rack, 3U Rack, 4U Rack ຈົນຮອດ 5U Rack.
- ເຄື່ອງແມ່ຂ່າຍທີ່ເປັນ Tower server Rack ທາງ ສອຊ ບໍ່ຮອງຮັບ.
- ມາດຖານອຸປະກອນເຄືອຂ່າຍ (Switch, Router, Etc.) ມີຂະໜາດໃນການຮອງຮັບ ຕັ້ງແຕ່ 1U Rack (ເທົ່າກັບ 4,445 cm), ຈົນຮອດ 42U Rack.
- ມາດຖານໄຟຟ້າ ມີລະບົບໄຟຟ້າທີ່ເປັນ AC 220V ແລະ DC 48V ຮອງຮັບຕັ້ງແຕ່ 1-2 ແຫຼ່ງ.
- ມາດຖານເຄືອຂ່າຍ ຮອງຮັບລະບົບເຊື່ອມຕໍ່ Ethernet ແບບ ຫົວສຽບ RJ-45 ຄວາມໄວ 1Gbps.

### 7.2 ມາດຖານຂອງບໍລິການຝາກເວັບໄຊ (Web Hosting)

- ສາມາດຮອງຮັບເວັບໄຊທີ່ມີການນໍາໃຊ້ພື້ນທີ່ ຕັ້ງແຕ່ຂະໜາດ 500MB ຂຶ້ນໄປ ຫຼື ຕາມການໃຫ້ບໍລິການຝາກເວັບໄຊ ທີ່ທາງ ສອຊ ໄດ້ກໍານົດໄວ້ໃນແບບຟອມ.
- ຮອງຮັບປະເພດຖານຂໍ້ມູນເຊັ່ນ: MySql, MarriaDB, ແລະ ອື່ນໆ ທີ່ລະບົບສາມາດຮອງຮັບໄດ້ ອີງຕາມລະບົບທີ່ໃຫ້ບໍລິການໃນແຕ່ໄລຍະ.
- ພາສາທີ່ໃຊ້ສ້າງ ຫຼື ຂຽນເວັບໄຊທີ່ລະບົບຮອງຮັບໄດ້ແກ່ Code PHP, JAVA, XML, HTML ທີ່ລະບົບສາມາດຮອງຮັບໄດ້ ອີງຕາມລະບົບທີ່ໃຫ້ບໍລິການໃນແຕ່ໄລຍະ.

### 7.3 ມາດຖານຂອງບໍລິການ ເຊົ່າເຊີເວີຈໍາລອງ (VPS)

- ລະບົບການໃຫ້ບໍລິການເຊົ່າ VPS ຂອງ ສູນຂໍ້ມູນແຫ່ງຊາດ ຮອງຮັບ ຕັ້ງແຕ່ vCPU 1 Core, 1 GB RAM, 20GB Storage ຂຶ້ນໄປຕາມການໃຫ້ບໍລິການເຊົ່າເຊີເວີຈໍາລອງທີ່ທາງ ສອຊ ໄດ້ກໍານົດໄວ້ໃນແບບຟອມ ແລະ ອີງໃສ່ຂໍ້ຈໍາກັດເມື່ອລະບົບມີການນໍາໃຊ້ Resource ຫຼາຍຂຶ້ນ.

- ລະບົບການໃຫ້ບໍລິການເຊົ່າ VPS ຂອງ ສູນຂໍ້ມູນແຫ່ງຊາດ ຮອງຮັບລະບົບປະຕິບັດການ Window ແລະ Linux OS.

## ໝວດທີ III
## ສິດ ແລະ ພັນທະ ຂອງ ຜູ້ຄຸ້ມຄອງ ແລະ ຜູ້ໃຊ້ບໍລິການສູນຂໍ້ມູນແຫ່ງຊາດ

**ມາດຕາ 8:** ການຄຸ້ມຄອງ ຂໍ້ມູນຂ່າວສານ ແລະ ບັນດາອຸປະກອນໄອຊີທີ

ການຄຸ້ມຄອງ ຂໍ້ມູນຂ່າວສານ ແລະ ບັນດາອຸປະກອນໄອຊີທີ ແບ່ງອອກເປັນ 2 ພາກສ່ວນຄື: ຜູ້ຄຸ້ມຄອງ ແລະ ຜູ້ໃຊ້ບໍລິການ.

**ມາດຕາ 9:** ສິດ ແລະ ພັນທະ ຂອງຜູ້ຄຸ້ມຄອງ.

**9.1.** ການບໍລິການ ຮັບຝາກເວັບໄຊ (Hosting)

- ພິຈາລະນາ ແລະ ສະໜອງ ການບໍລິການ ດ້ານເຕັກນິກຕາມຄວາມຕ້ອງການຂອງຜູ້ໃຊ້ບໍລິການ.
- ເກັບກຳຂໍ້ມູນທົ່ວໄປ ຂອງຜູ້ໃຊ້ບໍລິການ.
- ມີໜ້າທີ່ເກັບຄ່າບໍລິການ ເພື່ອມອບເປັນພັນທະໃຫ້ລັດ ຕາມລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ **002**/ປປທ.
- ຕິດຕາມກວດກາ ແລະ ຮັບປະກັນການເຮັດວຽກຂອງລະບົບບໍລິການຝາກເວັບໄຊ ໃຫ້ສາມາດເຮັດວຽກຕະຫຼອດ 24/7.
- ອຳນວຍຄວາມສະດວກ, ໃຫ້ຄຳປຶກສາ ດ້ານເຕັກນິກ ແລະ ພົວພັນປະສານງານເມື່ອມີເຫດຂັດຂ້ອງ ຫຼື ເຫດສຸກເສີນຕ່າງໆ.
- ສຳຮອງຂໍ້ມູນ ຕາມການຕົກລົງເຫັນດີຂອງຜູ້ມາໃຊ້ບໍລິການ ເຊິ່ງລະບຸໄວ້ໃນຂັ້ນຕອນການປະກອບຟອມ.
- ມີສິດໃນການປິດເວັບໄຊທັນທີ ໂດຍບໍ່ມີການແຈ້ງເຕືອນລ່ວງໜ້າ ກໍລະນີເວັບໄຊ ຫາກຖືກໂຈມຕີ, ຖືກແຮັກ ຫຼື ໄປໂຈມຕີຜູ້ອື່ນ.
- ຈະບໍ່ຮັບຜິດຊອບໃນການແກ້ໄຂທຸກບັນຫາ ກ່ຽວກັບເວັບໄຊ ຫາກຖືກໂຈມຕີ, ຖືກແຮັກ ຫຼື ໄປໂຈມຕີຜູ້ອື່ນ.
- ມີສິດສະໜອງຂໍ້ມູນສ່ວນບຸກຄົນ ຂອງຜູ້ໃຊ້ບໍລິການ ຕາມການສະເໜີຂອງພາກສ່ວນ ທີ່ມີສິດອຳນາດທາງ ດ້ານກົດໝາຍ ໃນກໍລະນີ ຂໍ້ມູນຂ່າວສານທີ່ມີຢູ່ໃນເວັບໄຊຂອງຕົນ ໄປສ້າງຄວາມເສຍຫາຍໃຫ້ກັບລະບົບຜູ້ອື່ນ, ບຸກຄົນອື່ນ ຫຼື ພາກສ່ວນອື່ນໆ.
- ລະບົບຈະແຈ້ງເຕືອນການໝົດອາຍຸ ການບໍລິການຮັບຝາກເວັບໄຊ ໂດຍຈະມີການແຈ້ງ ຄັ້ງທີ 1 ໄລຍະ 45 ວັນ, ຄັ້ງທີ 2 ໄລຍະ 30 ວັນ ແລະ ຄັ້ງທີ 3 ໄລຍະ 15 ວັນ ກ່ອນໝົດອາຍຸ ຫາກທາງ ສອຊ ບໍ່ໄດ້ຮັບການຢືນຢັນ ການຊຳລະຄ່າບໍລິການ ເມື່ອຮອດກຳນົດແລ້ວ ລະບົບຈະລະງັບການເຮັດວຽກຂອງເວັບໄຊນັ້ນໆ ຈົນກວ່າ ຈະໄດ້ຮັບການຊຳລະຄ່າບໍລິການ.

- ແຈ້ງເຕືອນ ຫຼື ຢຸດໃຫ້ບໍລິການ ຫາກຜູ້ໃຊ້ບໍລິການ ເຜີຍແຜ່ຂໍ້ມູນຂ່າວສານ ທີ່ມີເນື້ອໃນບໍ່ເໝາະສົມ ລະເມີດລະບຽບ ຂັດຕໍ່ກົດໝາຍຂອງ ສປປ ລາວ ເວັບໄຊ ດັ່ງກ່າວຈະຖືກລະງັບໄວ້ທັນທີຈົນກວ່າ ຈະໄດ້ຮັບການແກ້ໄຂ.
- ປິດການໃຊ້ບໍລິການຊົ່ວຄາວ ໂດຍບໍ່ມີການແຈ້ງເຕືອນ ຫາກຜູ້ໃຊ້ບໍລິການ ບໍ່ຊຳລະຄ່າບໍລິການ ຕາມການແຈ້ງເຕືອນຂອງລະບົບ, ຫຼັງ 60 ວັນ, ຜູ້ຄຸ້ມຄອງລະບົບ ຈະລຶບຂໍ້ມູນເວັບໄຊ ອອກຈາກລະບົບ.
- ມີສິດພິຈາລະນາໃນການເປີດ, ປິດ **Port**, ຕິດຕັ້ງບັນດາ **Plugin, Package** ແລະ **Software** ອື່ນໆຕາມການຮ້ອງຂອງຜູ້ໃຊ້ບໍລິການ ທີ່ອາດມີຜົນສະທ້ອນຕໍ່ກັບລະບົບລວມ.

**9.2. ການບໍລິການເຊົ່າເຊີເວີຈຳລອງ (VPS)**

- ພິຈາລະນາ ແລະ ສະໜອງ ການບໍລິການ ດ້ານເຕັກນິກຕາມຄວາມຕ້ອງການຂອງຜູ້ໃຊ້ບໍລິການ.
- ເກັບກຳຂໍ້ມູນທົ່ວໄປ ຂອງຜູ້ໃຊ້ບໍລິການ.
- ມີໜ້າທີ່ເກັບຄ່າບໍລິການ ເພື່ອມອບເປັນພັນທະໃຫ້ລັດ ຕາມລັດຖະບັນຍັດ ຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ **002**/ປປທ.
- ສະໜອງ ເຊີເວີຈຳລອງ, ລະບົບປະຕິບັດການ Windows, Linux, ເຊື່ອມຕໍ່ອິນເຕີເນັດ ຕາມການສະເໜີ ຂອງຜູ້ໃຊ້ບໍລິການ ຫຼື ຕາມເງື່ອນໄຂທີ່ທາງ ສອຊ ໄດ້ກຳນົດໄວ້.
- ຕິດຕາມ, ກວດກາ ແລະ ຮັບປະກັນການເຮັດວຽກຂອງລະບົບບໍລິການເຊີເວີຈຳລອງ ໃຫ້ສາມາດເຮັດວຽກຕະຫຼອດ 24/7.
- ອຳນວຍຄວາມສະດວກ, ໃຫ້ຄຳປຶກສາ ດ້ານເຕັກນິກ ແລະ ພົວພັນປະສານງານເມື່ອມີເຫດຂັດຂ້ອງ ຫຼື ເຫດສຸກເສີນຕ່າງໆ.
- ສຳຮອງຂໍ້ມູນ ຕາມການຕົກລົງເຫັນດີຂອງຜູ້ມາໃຊ້ບໍລິການ ເຊິ່ງລະບຸໄວ້ໃນຂັ້ນຕອນການປະກອບຟອມ.
- ມີສິດໃນການປິດເຊີເວີຈຳລອງທັນທີ ໂດຍບໍ່ມີການແຈ້ງເຕືອນລ່ວງໜ້າ ກໍລະນີເຊີເວີ ຫາກຖືກໂຈມຕີ, ຖືກແຮັກ ຫຼື ໄປໂຈມຕີຜູ້ອື່ນ.
- ຈະບໍ່ຮັບຜິດຊອບຜົນເສຍຫາຍໃດໆທັງໝົດ ໃນກໍລະນີ ເຊີເວີຈຳລອງຂອງຜູ້ໃຊ້ບໍລິການ ໄປໂຈມຕີລະບົບຂອງຜູ້ອື່ນ ຫຼື ຖືກໂຈມຕີຈາກພາຍນອກ ດ້ວຍຊ່ອງໂຫວ່ຂອງລະບົບຊອບແວ ທີ່ຕິດຕັ້ງ ເທິງເຊີເວີຈຳລອງ.
- ສະໜອງຂໍ້ມູນ ຂອງຜູ້ໃຊ້ບໍລິການ ຕາມການສະເໜີຂອງພາກສ່ວນ ທີ່ມີສິດອຳນາດທາງ ດ້ານກົດໝາຍ ໃນກໍລະນີ ຂໍ້ມູນຂ່າວສານ ຂອງຕົນ ໄປສ້າງຄວາມເສຍຫາຍໃຫ້ລະບົບຜູ້ອື່ນ, ບຸກຄົນອື່ນ ຫຼື ພາກສ່ວນອື່ນໆ.
- ແຈ້ງເຕືອນ ແລະ ຢຸດໃຫ້ບໍລິການ ຫາກຜູ້ໃຊ້ບໍລິການ ລະເມີດລະບຽບຂອງ ສອຊ ວາງອອກ ຫຼື ຜູ້ໃຊ້ບໍລິການເຜີຍແຜ່ຂໍ້ມູນຂ່າວສານ ທີ່ມີເນື້ອໃນບໍ່ເໝາະສົມ ທີ່ຂັດຕໍ່ກົດໝາຍ ສປປ ລາວ. ລະບົບ ດັ່ງກ່າວຈະຖືກລະງັບໄວ້ຈົນກວ່າ ຈະໄດ້ຮັບການແກ້ໄຂ.
- ແຈ້ງຜູ້ໃຊ້ບໍລິການ ຮັບຮູ້ໃນກໍລະນີເກີດເຫດຂັດຂ້ອງ ຫຼື ສອຊ ມີການປັບປຸງລະບົບ ເຕັກນິກ ແລະ ລະບົບພື້ນຖານໂຄງລ່າງຕ່າງໆ.
- ສະໜອງ ການເຊື່ອມຕໍ່ອິນເຕີເນັດ, ຕິດຕັ້ງ ລະບົບປະຕິບັດການ Window ແລະ Linux OS, CPU, RAM, Storage, ເລກໝາຍ IP, ລະບົບປ້ອງກັນ Firewall ຂັ້ນພື້ນຖານໃຫ້ກັບຜູ້ໃຊ້ບໍລິການ.

- ມີສິດພິຈາລະນາໃນການເປີດ, ປິດ Port ຕ່າງໆ ຕາມການຮ້ອງຂອງຜູ້ໃຊ້ບໍລິການ ຫຼື ປິດ **Port** ທີ່ອາດມີຜົນສະທ້ອນຕໍ່ກັບລະບົບລວມ.
- ສາມາດຢຸດບັນຊີຜູ້ໃຊ້ບໍລິການໄວ້ຊົ່ວຄາວ ກໍລະນີຜູ້ໃຊ້ບໍລິການ ບໍ່ຊໍາລະຄ່າບໍລິການ ຕາມການແຈ້ງເຕືອນ ໃນກໍລະນີ ທີ່ຜູ້ໃຊ້ບໍລິການ ບໍ່ຊໍາລະຄ່າບໍລິການ ເກີນ 30 ວັນຫຼັງຈາກມີການແຈ້ງເຕືອນ, ທາງ ສອຊ ຈະຍົກເລີກບັນຊີຜູ້ໃຊ້ບໍລິການເຊີເວີຈໍາລອງ ອອກທັນທີ ໂດຍບໍ່ແຈ້ງໃຫ້ຜູ້ໃຊ້ບໍລິການຮັບຮູ້ ແລະ ທາງ ສອຊ ຈະບໍ່ຮັບຜິດຊອບຕໍ່ຂໍ້ມູນທັງໝົດ ທີ່ມີຢູ່ໃນເຊີເວີຈໍາລອງຂອງບັນຊີນັ້ນ.

**9.3. ການບໍລິການເຊົ່າພື້ນທີ່ຝາກອຸປະກອນໄອຊີທີ**

- ພິຈາລະນາດ້ານເຕັກນິກຕາມການສະເໜີ ຂອງ ຜູ້ມາຂໍຝາກຂໍ້ມູນ ແລະ ອຸປະກອນໄອຊີທີຕ່າງໆ ນໍາ ສູນຂໍ້ມູນແຫ່ງຊາດ.
- ເກັບກໍາຂໍ້ມູນທົ່ວໄປ ຂອງ ຜູ້ໃຊ້ບໍລິການຝາກ ເຄື່ອງອຸປະກອນໄອຊີທີ.
- ກວດສອບ ເຄື່ອງອຸປະກອນໄອຊີທີຂອງຜູ້ໃຊ້ບໍລິການ ທີ່ຈະເອົາມາຝາກໄວ້.
- ເກັບຄ່າບໍລິການ ເພື່ອມອບເປັນພັນທະໃຫ້ລັດ ຕາມລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທໍານຽມ ແລະ ຄ່າບໍລິການ **002/ປປທ.**
- ສະໜອງຂໍ້ມູນ ຂອງຜູ້ໃຊ້ບໍລິການນໍາ ສູນຂໍ້ມູນແຫ່ງຊາດ ຕາມການສະເໜີຂອງພາກສ່ວນທີ່ມີສິດອໍານາດທາງດ້ານກົດໝາຍ ໃນກໍລະນີ ຂໍ້ມູນຂ່າວສານ ຫຼື ອຸປະກອນໄອຊີທີຂອງຕົນ ໄປສ້າງຄວາມເສຍຫາຍໃຫ້ລະບົບອື່ນ, ບຸກຄົນອື່ນ ຫຼື ພາກສ່ວນອື່ນໆ.
- ຮັບປະກັນການເຮັດວຽກຂອງບັນດາອຸປະກອນໄອຊີທີທີ່ຝາກໄວ້ ໃຫ້ສາມາດເຮັດວຽກໄດ້ຕະຫຼອດ 24/7.
- ຄຸ້ມຄອງລະບົບເຄືອຂ່າຍໃນການເຊື່ອມຕໍ່ໃຫ້ສາມາດໃຊ້ງານໄດ້ປົກກະຕິ.
- ໃຫ້ຄວາມຊ່ວຍເຫຼືອທາງດ້ານເຕັກນິກ ແລະ ພົວພັນປະສານງານໃຫ້ກັບ ຜູ້ໃຊ້ບໍລິການ ເມື່ອມີເຫດການຂັດຂ້ອງ ຫຼື ເຫດສຸກເສີນຕ່າງໆ.
- ຈະບໍ່ຮັບຜິດຊອບ ໃນການແກ້ໄຂບັນດາ ຮາດແວ, ຊອບແວ, ໂປຣແກຣມຕ່າງໆ ທີ່ຕິດຕັ້ງພາຍໃນລະບົບຂອງຜູ້ໃຊ້ບໍລິການ.
- ແຈ້ງຜູ້ໃຊ້ບໍລິການ ຮັບຮູ້ໃນກໍລະນີເກີດເຫດຂັດຂ້ອງ ທີ່ເກີດຈາກລະບົບພື້ນຖານໂຄງລ່າງຂອງ ສອຊ.
- ແຈ້ງໃຫ້ຜູ້ໃຊ້ບໍລິການ ເຄື່ອນຍ້າຍຖອນຄືນ ເມື່ອບັນດາອຸປະກອນໄອຊີທີ ຫມົດສັນຍາການເຊົ່າບໍລິການເຊົ່າພື້ນທີ່.
- ລະງັບການໃຊ້ງານບັນດາອຸປະກອນໄອຊີທີ ຂອງຜູ້ໃຊ້ບໍລິການຊົ່ວຄາວ ພາຍຫຼັງ 15 ວັນ ທີ່ໝົດສັນຍາ ເຊິ່ງຜູ້ໃຊ້ບໍລິການຍັງບໍ່ທັນແຈ້ງຈຸດປະສົງ ໃນການຕໍ່ສັນຍາ.
- ເຄື່ອນຍ້າຍ ບັນດາອຸປະກອນໄອຊີທີ ຂອງຜູ້ໃຊ້ບໍລິການອອກຈາກພື້ນທີ່ໃຫ້ບໍລິການ ພາຍຫຼັງ 30 ວັນ ທີ່ໝົດສັນຍາ ເຊິ່ງຜູ້ໃຊ້ບໍລິການຍັງບໍ່ທັນແຈ້ງຈຸດປະສົງ ໃນການຕໍ່ສັນຍາ.
- ແຈ້ງເຕືອນ, ຢຸດໃຫ້ບໍລິການ ຫາກຜູ້ໃຊ້ບໍລິການ ລະເມີດລະບຽບທີ່ວາງອອກ ຫຼື ຜູ້ໃຊ້ບໍລິການເຜີຍແຜ່ຂໍ້ມູນຂ່າວສານ ທີ່ມີເນື້ອໃນບໍ່ເໝາະສົມ ຂັດຕໍ່ກົດໝາຍ ສປປ ລາວ ບັນດາອຸປະກອນໄອຊີທີ ດັ່ງກ່າວຈະຖືກລະງັບໄວ້ຈົນກວ່າ ຈະໄດ້ຮັບການແກ້ໄຂ.

9.4 ການປ່ຽນແປງຂໍ້ມູນ, ລະບົບ ຫຼື ອຸປະກອນຕ່າງໆຂອງ ສອຊ

ກ່ອນຈະມີການປ່ຽນແປງຂໍ້ມູນ, ລະບົບ ຫຼື ອຸປະກອນຕ່າງໆເຊັ່ນ: ການອັບເດດລະບົບ, ບັນດາອຸປະກອນຕ່າງໆ ລວມເຖິງ ການບໍາລຸງຮັກສາລະບົບແອເປັນ, ລະບົບໄຟຟ້າ ແລະອື່ນໆ ພາຍໃນ ສອຊ, ທາງ ສອຊ ຈະມີການລາຍງານ ແລະ ແຈ້ງຈຸດປະສົງຕໍ່ຜູ້ໃຊ້ບໍລິການທີ່ອາດໄດ້ຮັບຜົນກະທົບທຸກຄັ້ງ (ແຈ້ງລ່ວງໜ້າກ່ອນ 2 ອາທິດ, ຍົກເວັ້ນກໍລະນີສຸກເສີນ), ພາຍຫຼັງສໍາເລັດແລ້ວ ຈະມີການລາຍງານ ຫຼື ແຈ້ງຜົນຂອງການປ່ຽນແປງນັ້ນຕໍ່ຜູ້ໃຊ້ບໍລິການ.

ມາດຕາ 10: ສິດ ແລະ ພັນທະ ຂອງຜູ້ໃຊ້ບໍລິການສູນຂໍ້ມູນແຫ່ງຊາດ.

**10.1 ຜູ້ໃຊ້ບໍລິການຝາກເວັບໄຊ**

- ຜູ້ໃຊ້ບໍລິການ ທີ່ເປັນນິຕິບຸກຄົນ ຫຼື ອົງການຈັດຕັ້ງຕ່າງໆ ຕ້ອງມອບສິດໃຫ້ບຸກຄົນ ຜູ້ມີໜ້າທີ່ຮັບຜິດຊອບດ້ານເຕັກນິກ ເພື່ອເປັນຕົວແທນປະສານງານ ໃນການຕິດຕໍ່ພົວພັນ ຖ້າມີການປ່ຽນແປງຜູ້ຮັບຜິດຊອບ ຕ້ອງໄດ້ແຈ້ງໃຫ້ ສູນຂໍ້ມູນແຫ່ງຊາດ ຮັບຊາບ.
- ຕ້ອງຮັບຜິດຊອບກັບ ຜົນເສຍຫາຍທັງໝົດທີ່ເກີດຂຶ້ນຈາກຂໍ້ມູນຕ່າງໆໃນເວັບໄຊ ຂອງຕົນ ທີ່ໄປສ້າງຜົນກະທົບໃຫ້ແກ່ລະບົບອື່ນບໍ່ວ່າຈະເປັນທາງກົງ ຫຼື ທາງອ້ອມ ຕາມລະບຽບກົດໝາຍ ຂອງ ສປປ ລາວ.
- ຮັບຜິດຊອບທຸກບັນຫາທີ່ເກີດຈາກ ການປັບປຸງ ແກ້ໄຂ ຂອງຜູ້ໃຊ້ບໍລິການ, ຫຼັງຈາກບັນຫາດັ່ງກ່າວໄດ້ຮັບການແກ້ໄຂເປັນທີ່ຮຽບຮ້ອຍແລ້ວ ຕ້ອງໄດ້ແຈ້ງໃຫ້ທາງ ສູນຂໍ້ມູນແຫ່ງຊາດ ຮັບຊາບ.
- ອໍານວຍຄວາມສະດວກ ຫຼື ສະໜອງ ຂໍ້ມູນອັນຈໍາເປັນ ໃຫ້ພາກສ່ວນທີ່ມີສິດອໍານາດດ້ານກົດໝາຍ ກໍລະນີລະບົບ ຫຼື ຂໍ້ມູນຂອງຕົນ ໄປສ້າງຄວາມເສຍຫາຍໃຫ້ພາກສ່ວນອື່ນ.
- ຈ່າຍຄ່າທໍານຽມ ແລະ ຄ່າບໍລິການທີ່ໄດ້ກໍານົດໄວ້ ຕາມລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທໍານຽມ ແລະ ຄ່າບໍລິການ 002/ປປທ.
- ເປັນເຈົ້າການສໍາຮອງຂໍ້ມູນຂອງເວັບໄຊ ແລະ ອັບເດດເວັບໄຊຂອງຕົນ ໃຫ້ມີຄວາມຮັບປະກັນ ແລະ ປອດໄພ.
- ປ່ຽນລະຫັດບັນຊີຜູ້ໃຊ້ ແລະ ລະຫັດເຂົ້າຖານຂໍ້ມູນ ທີ່ຜູ້ຄຸ້ມຄອງລະບົບມອບໃຫ້ໃນເບື້ອງຕົ້ນ.
- ຕ້ອງອັບເດດຊອບແວທີ່ໃຊ້ໃນການພັດທະນາເວັບໄຊ ຢ່າງເປັນປະຈໍາ.
- ຊໍາລະຄ່າບໍລິການ ຕາມການແຈ້ງເຕືອນຂອງລະບົບ 15 ວັນ ກ່ອນມື້ໝົດອາຍຸ.

**10.2 ການເຊົ່າເຊີເວີຈໍາລອງ**

- ຜູ້ໃຊ້ບໍລິການ ທີ່ເປັນນິຕິບຸກຄົນ ຫຼື ອົງການຈັດຕັ້ງຕ່າງໆ ຕ້ອງມອບສິດໃຫ້ບຸກຄົນ ຜູ້ມີໜ້າທີ່ຮັບຜິດຊອບດ້ານເຕັກນິກ ເພື່ອເປັນຕົວແທນປະສານງານ ໃນການຕິດຕໍ່ພົວພັນ.
- ຕ້ອງຮັບຜິດຊອບກັບ ຜົນເສຍຫາຍທັງໝົດທີ່ເກີດຈາກລະບົບເຊີເວີຈໍາລອງ ຫຼື ຂໍ້ມູນໃນລະບົບ ຂອງຕົນ ທີ່ໄປສ້າງຜົນເສຍຫາຍໃຫ້ແກ່ລະບົບ ຂອງພາກສ່ວນອື່ນ ບໍ່ວ່າຈະເປັນທາງກົງ ຫຼື ທາງອ້ອມ.
- ອໍານວຍຄວາມສະດວກ ຫຼື ສະໜອງ ຂໍ້ມູນອັນຈໍາເປັນ ໃຫ້ພາກສ່ວນທີ່ມີສິດອໍານາດດ້ານກົດໝາຍ ກໍລະນີລະບົບ ຫຼື ຂໍ້ມູນຂອງຕົນ ໄປສ້າງຄວາມເສຍຫາຍໃຫ້ລະບົບຂອງພາກສ່ວນອື່ນ.
- ເປັນເຈົ້າການໃນການສໍາຮອງຂໍ້ມູນຂອງຕົນ.
- ຕ້ອງປ່ຽນລະຫັດບັນຊີຜູ້ໃຊ້ ຫຼັງຈາກໄດ້ຮັບລະຫັດ ຈາກທາງ ສອຊ.

- ຮັບຜິດຊອບ ໃນການອັບເດດຊອບແວ ລະບົບປະຕິບັດການ OS ແລະ ລະບົບຊອບແວທີ່ຕິດຕັ້ງພາຍໃນ ເຊີເວີຈຳລອງໃຫ້ ມີຄວາມຮັບປະກັນ ແລະ ປອດໄພ.
- ຮັບຜິດຊອບຄ່າຊອບແວລາຍເຊັນ ລະບົບປະຕິບັດການ Window ຫຼື Linux License **OS** ແລະ ລະບົບຊອບແວຕ່າງໆ.
- ຮັບຜິດຊອບຕໍ່ບັນຫາໃດໆ ທີ່ເກີດຈາກການປັບປຸງລະບົບ, ການຕັ້ງຄ່າອື່ນໆ ຫຼື ເກີດຈາກ Software ທີ່ຕິດຕັ້ງຢູ່ໃນ ເຊີເວີຈຳລອງນັ້ນໆ.
- ຈ່າຍຄ່າທຳນຽມ ແລະ ຄ່າບໍລິການທີ່ໄດ້ກຳນົດໄວ້ ຕາມລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ **002**/ປປທ.
- ຊຳລະຄ່າບໍລິການ ຕາມການແຈ້ງເຕືອນ 15 ວັນ ກ່ອນມື້ໝົດອາຍຸ.

**10.3 ການບໍລິການເຊົ່າພື້ນທີ່ຝາກອຸປະກອນໄອຊີທີ**

- ຜູ້ໃຊ້ບໍລິການ ທີ່ເປັນ ນິຕິບຸກຄົນ ຫຼື ອົງການຈັດຕັ້ງຕ່າງໆ ຕ້ອງມອບສິດໃຫ້ບຸກຄົນ ຜູ້ມີໜ້າທີ່ຮັບຜິດຊອບດ້ານເຕັກນິກ ເພື່ອເປັນຕົວແທນປະສານງານ ໃນການຕິດຕໍ່ພົວພັນ.
- ຕ້ອງຮັບຜິດຊອບກັບ ຜົນເສຍຫາຍທັງໝົດທີ່ເກີດຈາກຂໍ້ມູນຂ່າວສານ, ອຸປະກອນ ຫຼື ລະບົບຂອງຕົນ ທີ່ໄປສ້າງຜົນເສຍຫາຍໃຫ້ແກ່ລະບົບ ຂອງພາກສ່ວນອື່ນ ບໍ່ວ່າຈະເປັນທາງກົງ ຫຼື ທາງອ້ອມ.
- ອຳນວຍຄວາມສະດວກ ຫຼື ສະໜອງ ຂໍ້ມູນອັນຈຳເປັນ ໃຫ້ພາກສ່ວນທີ່ມີສິດອຳນາດດ້ານກົດໝາຍ ກໍລະນີລະບົບ ຫຼື ຂໍ້ມູນຂອງຕົນ ໄປສ້າງຄວາມເສຍຫາຍໃຫ້ລະບົບຂອງພາກສ່ວນອື່ນ.
- ຮັບຜິດຊອບ ໃນການອັບເດດຊອບແວ ລະບົບປະຕິບັດການ OS ແລະ ລະບົບຊອບແວທີ່ຕິດຕັ້ງພາຍໃນ ລະບົບຂອງຕົນໃຫ້ ມີຄວາມຮັບປະກັນ ແລະ ປອດໄພ.
- ກໍລະນີ ບັນດາອຸປະກອນຂອງຜູ້ໃຊ້ບໍລິການ ທີ່ມາຝາກໄວ້ກັບ ສູນຂໍ້ມູນແຫ່ງຊາດ ເກີດມີບັນຫາໃດໜຶ່ງ ຜູ້ໃຊ້ບໍລິການຕ້ອງໄດ້ຮັບຜິດຊອບ ປັບປຸງ ແກ້ໄຂ ບັນຫາດ້ວຍຕົວເອງ ແລະ ຕ້ອງແຈ້ງໃຫ້ ສູນຂໍ້ມູນແຫ່ງຊາດຮັບຊາບ , ຫຼັງຈາກບັນຫາດັ່ງກ່າວໄດ້ຮັບການແກ້ໄຂເປັນທີ່ຮຽບຮ້ອຍແລ້ວ.
- ຈ່າຍຄ່າທຳນຽມ ແລະ ຄ່າບໍລິການທີ່ໄດ້ກຳນົດໄວ້ ຕາມລັດຖະບັນຍັດ ຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ **002**/ປປທ.
- ຜູ້ໃຊ້ບໍລິການ ທີ່ມີຈຸດປະສົງ ຕ້ອງການເຂົ້າມາກວດສອບ, ເຄື່ອນຍ້າຍ, ປັບປຸງ, ແກ້ໄຂ ຫຼື ນຳເອົາອຸປະກອນໃດໜຶ່ງ ເຂົ້າມາຕິດຕັ້ງ ຫຼື ນຳເອົາອອກໄປ ຕ້ອງໄດ້ປະກອບຂໍ້ມູນຕາມແບບຟອມ ທີ່ໄດ້ກຳນົດໄວ້ ແລະ ຮັບອະນຸຍາດຈາກ ທາງ ສອຊ ກ່ອນທຸກຄັ້ງ.

## ໝວດທີ IV
## ການເຜີຍແຜ່ຂໍ້ມູນຂ່າວສານຜ່ານອິນເຕີເນັດ

**ມາດຕາ 11 : ການເຜີຍແຜ່ຂໍ້ມູນຂ່າວສານ**

ການເຜີຍແຜ່ຂໍ້ມູນຂ່າວສານ ສາມາດເຜີຍແຜ່ໄດ້ ທັງພາຍໃນ ແລະ ພາຍນອກ ສ.ປ.ປ ລາວ ເພື່ອໂຄສະນາ ຫຼື ນຳສະເໜີໃຫ້ບຸກຄົນທົ່ວໄປ ທີ່ຢູ່ພາຍໃນ ແລະ ຕ່າງປະເທດ ໄດ້ຮັບຮູ້ ຫຼື ແລກປ່ຽນຂໍ້ມູນນຳກັນ.

ມາດຕາ 12: ຂັ້ນຕອນການເຜີຍແຜ່ຂໍ້ມູນຂ່າວສານ

- ນິຕິບຸກຄົນ ແລະ ອົງການຂອງລັດ ສາມາດເຜີຍແຜ່ຂໍ້ມູນຂ່າວສານແຕ່ຕ້ອງໄດ້ຮັບການຢັ້ງຢືນແຫຼ່ງທີ່ມາທີ່ເປັນທາງການ ຫຼື ມີຄວາມໜ້າເຊື່ອຖືຈາກຜູ້ເປັນເຈົ້າຂອງຢ່າງຖືກຕ້ອງ.
- ເນື້ອໃນຂໍ້ມູນຂ່າວສານກ່ອນເຜີຍແຜ່ອອກທາງອິນເຕີເນັດ ຕ້ອງຜ່ານການກວດກາຮັບຮອງ ດ້ານເນື້ອໃນຂອງຕົນ ຕ້ອງບໍ່ແຕະຕ້ອງ ເຖິງຄວາມໝັ້ນຄົງ ລະບອບການເມືອງ, ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ເສດຖະກິດ, ສັງຄົມ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ລວມເຖິງ ການໂຈມຕີ ຫຼື ໃສ່ຮ້າຍປ້າຍສີ ເຖິງອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງທົ່ວໄປ, ບຸກຄົນ, ນິຕິບຸກຄົນ, ເພື່ອເຮັດໃຫ້ເສື່ອມເສຍກຽດຕິຍົດ, ສັກສີ, ພາບພົດ, ຜົນປະໂຫຍດ ແລະ ຂັດຕໍ່ກົດໝາຍຂອງ ສ.ປ.ປ ລາວ.

ມາດຕາ 13: ຄວາມປອດໄພຂອງຂໍ້ມູນຂ່າວສານ

ຜູ້ເປັນເຈົ້າຂອງຂໍ້ມູນຂ່າວສານ ຕ້ອງຮັບປະກັນໃຫ້ໄດ້ເຖິງຄວາມຖືກຕ້ອງ ຂອງເນື້ອໃນຂໍ້ມູນຂ່າວສານ ແລະ ຮັບປະກັນບໍ່ໃຫ້ບຸກຄົນອື່ນ ສວຍໃຊ້, ປ່ຽນແປງຂໍ້ມູນຂ່າວສານຂອງຕົນໄປ ສ້າງຄວາມເສຍຫາຍໃຫ້ແກ່ບຸກຄົນອື່ນ.

## ໝວດທີ V

## ມາດຕະການຄວາມປອດໄພ

ມາດຕາ 14: ມາດຕະການຄວາມປອດໄພ ທາງດ້ານເຕັກນິກ ຂອງ ສອຊ

**14.1** ການເຂົ້າ-ອອກ ສູນຂໍ້ມູນແຫ່ງຊາດ

- ການເຂົ້າ ສູນຂໍ້ມູນແຫ່ງຊາດ
  - ບຸກຄົນພາຍນອກກ່ອນຈະເຂົ້າມາ ສອຊ ເພື່ອດຳເນີນການເຮັດວຽກຮ່ວມກັບສູນຂໍ້ມູນແຫ່ງຊາດ ຕ້ອງໄດ້ແຈ້ງຈຸດປະສົງ ລ່ວງໜ້າຢ່າງນ້ອຍ 1 ວັນລັດຖະການ, ຖ່າຍຮູບຜູ້ກ່ຽວຂ້ອງ, ປະກອບເອກະສານເພື່ອເຮັດບັດ (ເອການສັກຢາກັນພະຍາດ ໂຄວິດ 19) ແລະ ເຮັດໃບສະເໜີ ຂໍອະນຸຍາດຈາກ ຄະນະ ສອຊ.
  - ກ່ອນຈະເຂົ້າ ສູນຂໍ້ມູນແຫ່ງຊາດ ຕ້ອງລົງທະບຽນທຸກຄັ້ງໃສ່ປື້ມບັນທຶກ ເພື່ອບັນທຶກ ຈຸດປະສົງ, ຂອບເຂດການປະຕິບັດວຽກ, ວັນ ແລະ ເວລາໃນການເຂົ້າຢ່າງລະອຽດ.
  - ການເຂົ້າ ສູນຂໍ້ມູນແຫ່ງຊາດ ແຕ່ລະຄັ້ງຕ້ອງຕິດບັດສະແດງຕົວຕົນທີ່ກຳນົດໃຫ້ ແລະ ມີວິຊາການຂອງ ສອຊ ຕິດຕາມ.
  - ປະຕິບັດຕາມລະບຽບການ ທີ່ທາງ ສອຊ ໄດ້ວາງອອກແຕ່ລະໄລຍະ.
  - ສຳລັບບຸກຄົນພາຍນອກທີ່ຈະເຂົ້າສູນຂໍ້ມູນແຫ່ງຊາດ ຖ້າມີເຄື່ອງມື ຫຼື ອຸປະກອນຕ້ອງຫ້າມ (ຕາມມາດຕາທີ 16) ຕ້ອງໄດ້ຝາກໄວ້ກັບພະນັກງານຮັກສາຄວາມປອດໄພກ່ອນຈະເຂົ້າທຸກຄັ້ງ.
- ການອອກ ສູນຂໍ້ມູນແຫ່ງຊາດ
  - ພາຍຫຼັງເຂົ້າໄປປະຕິບັດພາລະກິດສຳເລັດແລ້ວ ແລະ ກ່ອນຈະອອກຈາກສູນຂໍ້ມູນຕ້ອງລົງລາຍເຊັນ ແລະ ເວລາໃສ່ປື້ມບັນທຶກທຸກຄັ້ງ.

- ສໍາລັບຄົນພາຍນອກ ຕ້ອງໄດ້ສົ່ງບັດກັບວິຊາການຜູ້ຕິດຕາມ ແລະ ເອົາເຄື່ອງມື ຫຼື ອຸປະກອນທີ່ຝາກໄວ້ກັບພະນັກງານຮັກສາຄວາມປອດໄພຄືນ.
- ປະຕິບັດຕາມລະບຽບການ ທີ່ທາງ ສອຊ ໄດ້ວ່າງອອກແຕ່ລະໄລຍະ.

**14.2 ການນໍາລະບົບ ຫຼື ອຸປະກອນ ເຂົ້າ-ອອກ ສູນຂໍ້ມູນແຫ່ງຊາດ**

- ຜູ້ທີ່ຈະນໍາເອົາລະບົບ ຫຼື ບັນດາອຸປະກອນໄອຊີທີ ລວມທັງອຸປະກອນຕ່າງໆ ເຂົ້າມາໃນສູນຂໍ້ມູນແຫ່ງຊາດ ຕ້ອງໄດ້ແຈ້ງຈຸດປະສົງ ແລະ ເຮັດໜັງສືສະເໜີເພື່ອຂໍອະນຸຍາດຈາກຄະນະ ສອຊ.
- ກ່ອນຈະຕິດຕັ້ງລະບົບ ຫຼື ບັນດາອຸປະກອນໄອຊີທີ ລວມທັງອຸປະກອນຕ່າງໆ ຕ້ອງໄດ້ຜ່ານການກວດກາສະພາບເຕັກນິກ, ຄວາມປອດໄພໃຫ້ຖືກຕ້ອງຕາມມາດຕະຖານ.
- ລະບົບ ຫຼື ບັນດາອຸປະກອນໄອຊີທີ ລວມທັງອຸປະກອນຕ່າງໆ ທີ່ຈະນໍາມາຕິດຕັ້ງ ຕ້ອງມີແຜນວາດເຕັກນິກ, ປຶ້ມຄູ່ມືການນໍາໃຊ້ ແລະ ການແກ້ໄຂບັນຫາຂັ້ນພື້ນຖານ.
- ພາຍຫລັງ ນໍາອຸປະກອນເຂົ້າ ຫຼື ການຕິດຕັ້ງສໍາເລັດຕ້ອງໄດ້ເຊັນໃບຢັ້ງຢືນເຕັກນິກ ທັງສອງຝ່າຍ (ຝ່າຍເຕັກນິກ ສອຊ ແລະ ຝ່າຍເຕັກນິກຜູ້ໃຊ້ບໍລິການ).
- ການນໍາລະບົບ ຫຼື ອຸປະກອນ ອອກ ສູນຂໍ້ມູນແຫ່ງຊາດ ຕ້ອງໄດ້ກວດສອບຮ່ວມກັບວິຊາການ ສອຊ ແລະ ໄດ້ຮັບອະນຸຍາດເຫັນດີຈາກ ຄະນະ ສອຊ, ຕ້ອງມີເອກະສານມອບຮັບຢ່າງເປັນລາຍລັກອັກສອນ ລະຫວ່າງ 2 ຝ່າຍ.

**14.3 ການເຂົ້າຫາ ອຸປະກອນ ຫຼື ລະບົບເຕັກນິກ**

ສອຊ ອະນຸຍາດໃຫ້ຜູ້ໃຊ້ບໍລິການ ສາມາດເຂົ້າຫາອຸປະກອນ ຫຼື ລະບົບເຕັກນິກ, ເພື່ອຕິດຕັ້ງ, ສ້ອມແປງ, ປ່ຽນຖ່າຍ, ປັບປຸງ, ຍົກລະດັບ ແລະ ບໍາລຸງຮັກສາ ຜ່ານ 3 ຊ່ອງທາງ ຄື:

- ຊ່ອງທາງທີ 1: ເຂົ້າຫາອຸປະກອນ ຫຼື ລະບົບເຕັກນິກ ທີ່ຫ້ອງເຄື່ອງເຕັກນິກ ຂອງ ສອຊ.
- ຊ່ອງທາງທີ 2: ຜ່ານລະບົບ ເຄື່ອຄ່າຍ ອິນເຕີເນັດ (Remote).
- ຊ່ອງທາງທີ 3: Remote hand ຮ້ອງຂໍໃຫ້ພະນັກງານເຕັກນິກ ສອຊ ຊ່ວຍໃນດ້ານເຕັກນິກພື້ນຖານ ເຊັ່ນ: ກວດກາສະຖານະການເຮັດວຽກ ຂອງບັນດາເຄື່ອງອຸປະກອນໄອຊີທີ, ຊ່ວຍໃນການປິດ-ເປີດ (reboot) ໃນກໍລະນີສຸກເສີນ ທີ່ຜູ້ຄຸ້ມຄອງບໍ່ສາມາດເຂົ້າມາແກ້ໄຂເອງໄດ້, ຜູ້ໃຊ້ບໍລິການທີ່ມີຈຸດປະສົງ ນໍາໃຊ້ຊ່ອງທາງນີ້ ຕ້ອງໄດ້ມີການສົ່ງຂໍ້ຄວາມ ຫຼື ອີເມວເພື່ອເປັນການຢັ້ງຢືນ ຈາກຜູ້ຄຸ້ມຄອງລະບົບຂອງຜູ້ໃຊ້ບໍລິການ.

**ມາດຕາ 15: ມາດຕະການຄວາມປອດໄພ ທາງດ້ານເຕັກນິກ ຂອງ ຜູ້ໃຊ້ບໍລິການ**

- ຕ້ອງໄດ້ປະຕິບັດຕາມຄໍາແນະນໍາຂອງ ສອຊ ຢ່າງເຂັ້ມງວດ ເພື່ອຮັບປະກັນດ້ານຄວາມປອດໄພ.
- ຕ້ອງມີວິຊາການເຕັກນິກ ຜູ້ທີ່ສາມາດຕິດຕໍ່ພົວພັນປະສານງານ (ສໍາຮອງ) ທີ່ເຂົ້າໃຈລະບົບ ແລະ ຂໍ້ມູນຂ່າວສານຂອງຕົນ ຢ່າງລະອຽດ, ສາມາດປະສານງານກັບທາງ ສອຊ ໄດ້ໂດຍກົງ ແລະ ຕອບສະໜອງໃນການແກ້ໄຂບັນຫາຕ່າງໆຂອງລະບົບ ທີ່ອາດເກີດຂຶ້ນໄດ້.

- ຕ້ອງປິດລັບ ຊື່ບັນຊີນຳໃຊ້ ແລະ ລະຫັດຜ່ານ (Username and Password) ທີ່ໃຊ້ເຂົ້າລະບົບ ແລະ ເກັບຮັກສາໄວ້ເປັນຢ່າງດີ, ຄວນມີການປ່ຽນລະຫັດຜ່ານເປັນໄລຍະ ຢ່າງໜ້ອຍທຸກໆ 03 ເດືອນ.
- ຕ້ອງຮັບຜິດຊອບຊຳລະຄ່າຊອບແວ, ອັບເດດ ບັນດາຊອບແວ (Software) ທີ່ໃຊ້ໃນລະບົບຂອງຕົນ ໃຫ້ມີຄວາມຮັບປະກັນ ແລະ ປອດໄພ.

## ໝວດທີ VI
## ຂໍ້ຫ້າມ

**ມາດຕາ 16: ຂໍ້ຫ້າມສຳລັບຜູ້ໃຊ້ບໍລິການ ຝາກຂໍ້ມູນຂ່າວສານ ແລະ ອຸປະກອນໄອຊີທີ**

- ຫ້າມກະທຳສິ່ງໃດໆ ທີ່ສ້າງຄວາມເສຍຫາຍ ໃຫ້ແກ່ລະບົບເຕັກນິກ ຂອງ ສອຊ.
- ຫ້າມກະທຳສິ່ງໃດໆທີ່ຂັດຕໍ່ກົດໝາຍ ຂອງ ສປປ ລາວ, ລະບຽບຫຼັກການຂອງ ກະຊວງ ຕສ ແລະ ສອຊ.
- ຫ້າມເຂົ້າ-ອອກ ຫຼື ນຳເອົາສິ່ງຂອງໃດໆ ເຂົ້າໃນຫ້ອງເຄື່ອງເຕັກນິກ ໂດຍບໍ່ໄດ້ຮັບການອະນຸຍາດ ຈາກ ສອຊ.
- ຫ້າມບໍ່ໃຫ້ຕິດຕັ້ງຊອບແວປອມທີ່ບໍ່ຜ່ານການຊຳລະຄ່າຊອບແວຖືກຕ້ອງຕາມກົດໝາຍ.
- ຫ້າມຖ່າຍຮູບ, ຖ່າຍວີດີໂອ ໃນຫ້ອງເຄື່ອງເຕັກນິກ ຂອງ ສອຊ.
- ຫ້າມນຳເອົາອາຫານ ຫຼື ເຄື່ອງດື່ມເຂົ້າມາໃນຫ້ອງເຄື່ອງເຕັກນິກ ຂອງສູນຂໍ້ມູນແຫ່ງຊາດຢ່າງເດັດຂາດ.
- ຫ້າມນຳອາວຸດທຸກຊະນິດ, ສານເຄມີ, ທາດເບື່ອ, ອຸປະກອນ ແລະ ຂໍ້ມູນຂ່າວສານ ທີ່ເປັນອັນຕະລາຍ ແລະ ມີຄວາມສ່ຽງ ເຂົ້າມາພາຍໃນສູນຂໍ້ມູນແຫ່ງຊາດ ຢ່າງເດັດຂາດ.
- ຫ້າມໃສ່ຊຸດທີ່ປົກປິດ ຫຼື ໝວກ ທີ່ປົກປິດຕົວຕົນເຂົ້າຫ້ອງເຄື່ອງເຕັກນິກຂອງ ສອຊ ຢ່າງເດັດຂາດ.
- ຫ້າມແຕະຕ້ອງ, ແກ້ໄຂ ຫຼື ປ່ຽນແປງບັນດາອຸປະກອນ ແລະ ລະບົບຕ່າງໆ ທີ່ຢູ່ໃນຫ້ອງເຄື່ອງເຕັກນິກ ໂດຍບໍ່ໄດ້ຮັບອະນຸຍາດຈາກ ສອຊ.
- ຫ້າມນຳໃຊ້ ຂໍ້ມູນຂ່າວສານ, ອຸປະກອນໄອຊີທີ, ຊອບແວ ຫຼື ໂປຣແກຣມນຳໃຊ້ຕ່າງໆ ທີ່ຝາກໄວ້ນຳ ຫ້ອງເຄື່ອງເຕັກນິກ ຂອງ ສອຊ ເປັນເຄື່ອງມື ໃນການໄປໂຈມຕີຜູ້ອື່ນ ທັງພາຍໃນ ແລະ ຕ່າງປະເທດ ເຮັດໃຫ້ເກີດຄວາມເສຍຫາຍ.
- ຫ້າມມີການເຄື່ອນຍ້າຍ ຫຼື ປ່ຽນແປງ ອຸປະກອນໄອຊີທີໂດຍບໍ່ໄດ້ຮັບອະນຸຍາດ ຈາກ ສອຊ.
- ຫ້າມ ເຂົ້າ - ອອກ ຫ້ອງເຄື່ອງໂດຍບໍ່ໄດ້ຮັບອະນຸຍາດ ຫຼື ບໍ່ມີຜູ້ຕິດຕາມຈາກ ສອຊ.
- ຫ້າມສວຍໃຊ້ໂອກາດໃນການເຂົ້າ - ອອກ ສອຊ ເພື່ອຈຸດປະສົງໂຈລະກຳ ຫຼື ທຸກການກະທຳທີ່ບໍ່ຫວັງດີ ຜິດຕໍ່ລະບຽບ ແລະ ກົດໝາຍ ສປປ ລາວ.
- ຫ້າມເຜີຍແຜ່ ຫຼື ໂຄສະນາ ຂໍ້ມູນຂ່າວສານ ທີ່ມີເນື້ອໃນບໍ່ດີຕໍ່ປະເທດຊາດ, ລະບອບການເມືອງ, ຄວາມສະຫງົບສຸກຂອງສັງຄົມ ແລະ ວັດທະນະທຳອັນດີງາມຂອງປວງຊົນລາວ.
- ຫ້າມເຜີຍແຜ່ຄວາມລັບຂອງຊາດ, ທາງການທະຫານ ຫຼື ຄວາມລັບດ້ານອື່ນ ທີ່ກຳນົດໄວ້ຢູ່ໃນລະບຽບກົດໝາຍຂອງ ສປປ ລາວ.
- ຫ້າມເຜີຍແຜ່ຂໍ້ມູນຂ່າວສານ ທີ່ບໍ່ຖືກຕ້ອງ ແລະ ບິດເບືອນຄວາມຈິງ ເພື່ອຈຸດປະສົງສ້າງຄວາມເຊື່ອມເສຍຕໍ່ກຽດສັກສີ ຫຼື ສິດທິສ່ວນບຸກຄົນຂອງຄົນອື່ນ, ພາກສ່ວນ, ສະຖາບັນ ຫຼື ອົງການອື່ນ.

- ຫ້າມນຳໃຊ້ການບໍລິການຕ່າງໆ ເພື່ອເປັນຊ່ອງທາງ ທີ່ກໍ່ໃຫ້ເກີດຄວາມເສຍຫາຍ ແກ່ຜູ້ອື່ນ.
- ຫ້າມນຳໃຊ້ການບໍລິການຕ່າງໆ ຂອງສູນຂໍ້ມູນ ແຫ່ງຊາດ ເພື່ອດັກຈັບຂໍ້ມູນທາງເຄືອຂ່າຍ ຫຼື ໂປຣແກຣມ ພາຍນອກ ມາໃຊ້ໃນລະບົບ ທີ່ອາດກໍ່ໃຫ້ເກີດຄວາມເສຍຫາຍ ພາຍໃນລະບົບ ຂອງຜູ້ໃຫ້ບໍລິການ.
- ຫ້າມເຜີຍແຜ່, ຕັດຕໍ່ຮູບພາບ, ດັດແປງ, ນຳສະເໜີ, ສົ່ງ, ສົ່ງຕໍ່ ບັນດາຂໍ້ມູນຂ່າວສານຕ່າງໆ ທີ່ມີລັກສະນະ ລາມົກ, ອະນາຈານ, ຊື້ຂາຍບໍລິການທາງເພດ, ຊວນເຊື່ອ, ຕົວະຍົວະ, ຫຼອກລວງ, ແຕະຕ້ອງເຖິງຮີດຄອງ ປະເພນີອັນດີງາມ ຂອງຊາດ, ແຕະຕ້ອງເຖິງຊັບສິນທາງປັນຍາຂອງຜູ້ອື່ນ, ຕໍ່ຕ້ານພັກ ແລະ ລັດຖະບານ.
- ຫ້າມຍຸຍົງ ແລະ ສົ່ງເສີມການເຄື່ອນໄຫວ ທີ່ເປັນການກໍ່ການຮ້າຍ, ຄາດຕະກຳ ແລະ ປົ້ນປ່ວນຕໍ່ສັງຄົມ.
- ຫ້າມໂຄສະນາບິດເບືອນ ແລະ ເຜີຍແຜ່ຂ່າວອະກຸສົນ ເພື່ອສ້າງຄວາມແບ່ງແຍກ ລະຫວ່າງ ປະຊາຊົນ ບັນດາຊົນເຜົ່າ ທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 17: ຂໍ້ຫ້າມສຳລັບພະນັກງານ ສອຊ**

- ຫ້າມກົດໜ່ວງ, ຖ່ວງດຶງ ແລະ ປອມແປງເອກະສານ ກ່ຽວກັບການໃຫ້ບໍລິການ ຂອງສູນຂໍ້ມູນແຫ່ງຊາດ.
- ຫ້າມສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວກັບຜູ້ໃຊ້ບໍລິການ.
- ຫ້າມເປີດເຜີຍຂໍ້ມູນລັບຂອງຜູ້ໃຊ້ບໍລິການ.
- ຫ້າມມີພຶດຕິກຳອື່ນ ທີ່ລະເມີດຕໍ່ລະບຽບ ຂອງ ສອຊ ກໍ່ຄື ກົດລະບຽບຂອງ ກະຊວງ ຕສ ແລະ ກົດໝາຍ ສປປ ລາວ ທີ່ກ່ຽວຂ້ອງ.
- ຫ້າມປະລະໜ້າທີ່ໃນການຕິດຕາມເວລາທີ່ໃຊ້ຜູ້ບໍລິການເຂົ້າມາປະຕິບັດໜ້າທີ່ຢູ່ພາຍໃນຫ້ອງສູນຂໍ້ມູນ ແຫ່ງຊາດ.

## ໝວດທີ VII

## ການຍົກເລີກ, ຢຸດເຊົາຊົ່ວຄາວ ແລະ ຢຸດເຊົາຖາວອນ ສຳຫຼັບການບໍລິການຂໍ້ມູນຂ່າວສານ ຜ່ານອິນເຕີເນັດ ແລະ ມາດຕະການການປັບໄໝ

**ມາດຕາ 18: ການຍົກເລີກໃຫ້ບໍລິການ**

**18.1 ການຍົກເລີກໃຫ້ບໍລິການ ທີ່ບໍ່ໄດ້ແຈ້ງໃຫ້ຊາບລ່ວງໜ້າ.**

- ຜູ້ໃຊ້ບໍລິການ ນຳໃຊ້ເຄື່ອງອຸປະກອນໄອຊີທີ ຫຼື ຂໍ້ມູນຂ່າວສານ ທີ່ມາຝາກໄວ້ນຳ ສອຊ ໄປກະທຳຜິດຕໍ່ ແນວທາງນະໂຍບາຍຂອງພັກ ແລະ ກົດໝາຍ ຂອງ ສປປ ລາວ.
- ເຄື່ອງອຸປະກອນໄອຊີທີ ຫຼື ຂໍ້ມູນຂ່າວສານ ທີ່ຝາກໄວ້ນຳ ສອຊ ມີຄວາມສ່ຽງສ້າງຄວາມເສຍຫາຍຕໍ່ລະ ບອບການເມືອງ, ເສດຖະກິດ, ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ວັດທະນະທຳ-ສັງ ຄົມ ຂອງ ສປປ ລາວ.
- ຜູ້ໃຊ້ບໍລິການ ນຳໃຊ້ເຄື່ອງອຸປະກອນໄອຊີທີ ຫຼື ຂໍ້ມູນຂ່າວສານຂອງຕົນ ເປັນເຄື່ອງມືເພື່ອໂຈມຕີ ລະບົບ ສອຊ ຫຼື ຜູ້ອື່ນ, ຫຼື ປ່ອຍໃຫ້ຜູ້ອື່ນນຳໃຊ້ ເຄື່ອງອຸປະກອນໄອຊີທີ ຫຼື ຂໍ້ມູນຂ່າວສານ ຂອງຕົນໄປໂຈມຕີ ລະບົບ ສອຊ ຫຼື ຜູ້ອື່ນຈົນເກີດຄວາມເສຍຫາຍ.

**18.2** ການຍົກເລີກໃຫ້ບໍລິການ ທີ່ແຈ້ງໃຫ້ຊາບລ່ວງໜ້າ 30 ວັນ

- ພາຍຫຼັງໝົດກຳນົດສັນຍາເຊົ່າພື້ນທີ່, ຝາກເຄື່ອງອຸປະກອນໄອຊີທີ ຫຼື ຂໍ້ມູນຂ່າວສານ ໂດຍທີ່ຜູ້ໃຊ້ບໍລິການ ບໍ່ໄດ້ແຈ້ງຈຸດປະສົງ ໃນການຕໍ່ສັນຍາການນຳໃຊ້ແກ່ທາງ ສອຊ.

**ມາດຕາ 19: ການຢຸດເຊົາໃຫ້ບໍລິການຊົ່ວຄາວ**

- ມີການລະເມີດຕໍ່ລະບຽບກົດໝາຍ ຂອງ ສປປ ລາວ ໂດຍເຜີຍແຜ່ເນື້ອໃນທີ່ບໍ່ເໝາະສົມ ອີງຕາມການສະເໜີເປັນລາຍລັກອັກສອນ ຈາກບັນດາພາກສ່ວນທີ່ກ່ຽວຂ້ອງຕາມອຳນາດ ຂອງ ລັດ ຫຼື ລະເມີດຕໍ່ລະບຽບສະບັບນີ້, ການຢຸດເຊົາໃຊ້ຊົ່ວຄາວຈະມີຜົນທັນທີ.
- ເມື່ອຜູ້ໃຊ້ບໍລິການບໍ່ຊຳລະຄ່າບໍລິການໃຫ້ ສອຊ ຕາມການແຈ້ງເຕືອນທີ່ໄດ້ກຳນົດໄວ້.
- ລະບົບອຸປະກອນໄອຊີທີ ຫຼື ຂໍ້ມູນຂ່າວສານ ມີຄວາມສ່ຽງທີ່ຈະສ້າງຄວາມເສຍຫາຍ ໃຫ້ແກ່ລະບົບເຕັກນິກ ຂອງ ສອຊ ແລະ ລະບົບຂອງຜູ້ອື່ນ.

**ມາດຕາ 20: ການຢຸດເຊົາໃຫ້ບໍລິການຖາວອນ**

- ມີການລະເມີດຕໍ່ລະບຽບ ຂອງ ສອຊ ກໍ່ຄື ກະຊວງ ຕສ ແລະ ກົດໝາຍ ຂອງ ສປປ ລາວ ໂດຍໄດ້ຮັບການແຈ້ງເຕືອນແລ້ວ ແຕ່ບໍ່ດຳເນີນການປັບປຸງແກ້ໄຂ.
- ເປັນເຄື່ອງມືບຸກໂຈມຕີລະບົບເຕັກນິກ ຂອງ ສອຊ, ລະບົບຂອງຜູ້ອື່ນທີ່ສົ່ງຜົນກະທົບທີ່ສ້າງຄວາມເສຍຫາຍ.

**ມາດຕາ 21: ເງື່ອນໄຂການສືບຕໍ່ການນຳໃຊ້ ການບໍລິການ**

- ກໍລະນີການຢຸດເຊົາຊົ່ວຄາວ ເມື່ອຜູ້ເປັນເຈົ້າຂອງລະບົບ ອຸປະກອນໄອຊີທີ ຫຼື ຂໍ້ມູນຂ່າວສານ ມີການປັບປຸງປ່ຽນແປງ ຂໍ້ຜິດພາດໃນລະບົບຂອງຕົນ ແລະ ຕ້ອງໄດ້ຮັບການເຫັນດີຈາກ ຄະນະ ສອຊ.
- ກໍລະນີການຢຸດເຊົາຖາວອນ ຜູ້ເປັນເຈົ້າຂອງລະບົບ ອຸປະກອນໄອຊີທີ ຫຼື ຂໍ້ມູນຂ່າວສານ ກໍ່ຕ້ອງໄດ້ມາຂໍອະນຸຍາດຄືນໃໝ່ທັງໝົດ.

**ມາດຕາ 22: ມາດຕະການປັບໄໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຕໍ່ ລະບຽບການສະບັບນີ້ ຈະຖືກປັບໄໝ ຫຼື ທັງຖືກປັບໄໝ ແລະ ດຳເນີນຄະດີ ຕາມກົດໝາຍຂອງ ສປປ ລາວ ໃນແຕ່ລະກໍລະນີ ດັ່ງນີ້:

- ການກະທຳທັງໃນແບບເຈດຕະນາ ຫຼື ບໍ່ເຈດຕະນາ ທີ່ສ້າງຄວາມເສຍຫາຍໃຫ້ແກ່ລະບົບເຕັກນິກ ຂອງ ສອຊ ຜູ້ກະທຳຜິດຕ້ອງໄດ້ຮັບຜິດຊອບຄວາມເສຍຫາຍດັ່ງກ່າວທັງໝົດ ແລະ ສ້ອມແປງໃຫ້ຢູ່ໃນສະພາບເດີມ.
- ນຳໃຊ້ ຂໍ້ມູນຂ່າວສານ, ອຸປະກອນໄອຊີທີທີ່ຝາກໄວ້ນຳ ຫ້ອງເຄື່ອງເຕັກນິກ ຂອງ ສອຊ ເປັນເຄື່ອງມືໄປໂຈມຕີຜູ້ອື່ນ ເຮັດໃຫ້ເກີດຄວາມເສຍຫາຍ ຕ້ອງໄດ້ຮັບຜິດຊອບຄວາມເສຍຫາຍດັ່ງກ່າວທັງໝົດ ແລະ ທົດແທນຄືນຄ່າເສຍຫາຍ ຕາມຄຳຮຽກຮ້ອງຂອງຜູ້ຖືກເສຍຫາຍ ໃຫ້ແກ່ ສອຊ ພ້ອມທັງຖືກດຳເນີນຄະດີຕາມກົດໝາຍຂອງ ສປປ ລາວ.

- ການສວຍໃຊ້ໂອກາດໃນການເຂົ້າ-ອອກ ສອຊ ເພື່ອຈຸດປະສົງໂຈລະກຳ ຫຼື ທຸກການກະທຳທີ່ບໍ່ຫວັງດີຕໍ່ດ້ານວັດຖຸ ແລະ ຂໍ້ມູນຂ່າວສານທຸກຢ່າງໃນອາຄານ ແລະ ຊັບສິນທີ່ຂຶ້ນກັບ ສອຊ ຈະຖືກປັບໄໝ ຕາມມູນຄ່າຄວາມເສຍຫາຍ ຫຼື ຖືກດຳເນີນຄະດີຕາມກົດໝາຍຂອງ ສປປ ລາວ.
- ເຜີຍແຜ່ ຫຼື ໂຄສະນາ ຂໍ້ມູນຂ່າວສານ ທີ່ມີເນື້ອໃນອັນບໍ່ດີຕໍ່ປະເທດຊາດ, ລະບອບການເມືອງ, ຄວາມສະຫງົບສຸກຂອງສັງຄົມ ແລະ ວັດທະນະທຳອັນດີງາມຂອງປວງຊົນລາວ ຫຼື ໄປໂຈມຕີຜູ້ອື່ນ ເຮັດໃຫ້ຜູ້ອື່ນເສຍຫາຍ ທັງດ້ານພາບພົດ ແລະ ເສຍຜົນປະໂຫຍດ ທັງໃນແບບເຈດຕະນາ ຫຼື ບໍ່ເຈດຕະນາ ຜູ້ກະທຳຜິດຕ້ອງຮັບຜິດຊອບຄວາມເສຍຫາຍທັງໝົດ ແລະ ທົດແທນຄືນຕາມມູນຄ່າຄວາມເສຍຫາຍ.
- ທຸກໆການກະທຳ ທີ່ລະບຸໃນຂໍ້ຫ້າມ (ມາດຕາ16) ກໍ່ໃຫ້ເກີດ ຄວາມເສຍຫາຍ ທີ່ໄດ້ລະບຸໄວ້ໃນ ກົດໝາຍ ສປປ ລາວ ທີ່ກ່ຽວຂ້ອງ ຕ້ອງໄດ້ຮັບໂທດຕາມກົດໝາຍດັ່ງກ່າວ.

## ໝວດທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 23: ການຈັດຕັ້ງປະຕິບັດ.**

ສູນອິນເຕີເນັດ ແຫ່ງຊາດ ເປັນຜູ້ຄຸ້ມຄອງທຸກລະບົບ ທີ່ຕິດຕັ້ງຢູ່ໃນ ສູນຂໍ້ມູນແຫ່ງຊາດ ແລະ ເປັນໃຈກາງໃນການປະສານງານກັບທຸກພາກສ່ວນ ທີ່ຝາກຂໍ້ມູນຂ່າວສານ, ອຸປະກອນໄອຊີທີ ແລະ ອຸປະກອນຕ່າງໆ ໄວ້ທີ່ສູນຂໍ້ມູນແຫ່ງຊາດ.

**ມາດຕາ 24: ຜົນສັກສິດ.**

ລະບຽບການສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ນັບແຕ່ມື້ ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າສູນ**

ແກ້ວວິສຸກ ໂສລະພົມ